ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 16 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 25 NOV 2015

ສຳນັກງານ ຄຄຊ
ສົ່ງ ຮັບ ເລກທີ...1218......
ວັນທີ 26 NOV 2015
ໂທລະສັບ 021 217770

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 10/2015 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I

## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ; ປະຕິບັດລະບອບການສ່ອງແສງລາຍງານ ແລະ ການດຳເນີນຊີວິດການເມືອງພາຍໃນໜ່ວຍພັກ, ກົມກອງ ແລະ ອົງການຈັດຕັ້ງ ມະຫາຊົນ ປະຈຳເດືອນ ເພື່ອກວດກາຕີລາຄາຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ອັນພົ້ນເດັ່ນແມ່ນ: ສຳເລັດກອງປະຊຸມສ່ອງແສງວຽກງານສາຍພັກ ແລະ ສາຍລັດ ປະຈຳເດືອນ 9/2015, ສຳເລັດການຈັດຝຶກອົບຮົມວຽກງານກວດກາພັກ-ລັດ ໃນຂະແໜງທະນາຄານ ຊຸດທີ VI ປະຈຳປີ 2015; ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານພົ້ນເດັ່ນ

1. ❶ວຽກງານຄຸ້ມຄອງທະນາຄານທຸລະກິດ: ສຳເລັດແຈ້ງເຖິງທະນາຄານທຸລະກິດທົ່ວລະບົບ ເພື່ອລາຍງານຂໍ້ມູນກ່ຽວກັບລາຍການຄ່າທຳນຽມທີ່ຕິດພັນກັບການສະໜອງສິນເຊື່ອ; ກ່າວເຕືອນທະນາຄານທຸລະກິດ 10 ແຫ່ງ ທີ່ບໍ່ສົ່ງລາຍງານຂໍ້ມູນເງິນຝາກ-ເງິນກູ້ ແລະ ອັດຕາດອກເບ້ຍເງິນຝາກ-ເງິນກູ້ສະເລ່ຍຖ່ວງນ້ຳໜັກຂອງທະນາຄານ; ແຈ້ງການເຖິງທະນາຄານທຸລະກິດ 8 ແຫ່ງ ທີ່ມີໜີ້ NPL ສູງເກີນ 3%; ❷ວຽກງານຄຸ້ມຄອງສະຖາບັນການເງິນ ສຳເລັດການມອບ-ຮັບໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ ໃຫ້ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ (ສກຈບ) ເພື່ອການພັດທະນາ ແລະ ສົ່ງເສີມທຸລະກິດ, ສກຈບ ສຸກຮຸ່ງເຮືອງ ແລະ ບໍລິສັດ ຄົມທາມ ເຊົ່າສິນເຊື່ອ; ລົງກວດກາສຸກເສີນ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ) ແຂວງວຽງຈັນ;

2. ສຳເລັດການນຳສິ່ງຜົນການຄັດເລືອກກົມກອງລວມໝູ່ ແລະ ບຸກຄົນ ເນື່ອງໃນໂອກາດສະເຫຼີມສະຫຼອງສອງວັນປະຫວັດສາດ ໃຫ້ກະຊວງພາຍໃນ;

3. ສຳເລັດການໂອນອາກອນອວ່າຍໜີ້ 3 ແຈ ຈຳນວນ 1,53 ຕື້ກີບ;

4. ໄດ້ຮັບເງິນປອມ ແລະ ອອກໃບຢັ້ງຢືນເງິນປອມໃຫ້ ປກສ ນະຄອນຫຼວງວຽງຈັນ 1 ຄັ້ງ ຊຶ່ງມີປະເພດໃບເງິນ ຄື: ໃບ 100 ໂດລາ 4 ໃບ ແລະ ທະນາຄານພັດທະນາລາວ ສາຂາໂພນໂຮງ ໃບ 100.000 ກີບ 1 ໃບ;

5. ສຳເລັດການຈັດກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ນິຕິກຳທີ່ກ່ຽວຂ້ອງ ຢູ່ພາກກາງແຂວງສະຫວັນນະເຂດ, ຄຳມ່ວນ ແລະ ບໍລິຄຳໄຊ;

6. ສຳເລັດການເຊັນ MOU ໃນການແລກປ່ຽນຂໍ້ມູນຂ່າວສານທີ່ຕິດພັນກັບວຽກງານຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ກັບກົມກວດກາຕ້ານການສໍ້ລາດບັງຫຼວງ, ອົງການກວດກາລັດຖະບານ ແລະ ກົມສ່ວຍສາອາກອນ, ກະຊວງການເງິນ;

7. ປັດຈຸບັນໄດ້ຮັບສຳນວນທຸລະກຳທີ່ສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດ ທັງໝົດ 202 ສະບັບ;

8. ວຽກງານກະກຽມເປັນເຈົ້າພາບຈັດກອງປະຊຸມອາຊຽນຂະແໜງການເງິນ-ທະນາຄານ ❶ສຳເລັດການເຂົ້າຮ່ວມກອງປະຊຸມຄະນະຊີ້ນຳລວມ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ກັບ ກະຊວງການເງິນ ກ່ຽວກັບການກະກຽມເປັນປະທານ ແລະ ເຈົ້າພາບກອງປະຊຸມອາຊຽນຂະແໜງການເງິນ-ທະນາຄານ ປີ 2016; ❷ສຳເລັດການຈັດຝຶກອົບຮົມໃຫ້ແກ່ພະນັກງານຕິດຕາມທີ່ຮັບໃຊ້ກອງປະຊຸມອາຊຽນຂະແໜງການເງິນ-ທະນາຄານ ປີ 2016; ❸ສຳເລັດການເປັນເຈົ້າພາບຈັດກອງປະຊຸມຄະນະກຳມະການດ້ານເນື້ອໃນ ເພື່ອກະກຽມໃຫ້ແກ່ການເປັນເຈົ້າພາບ ແລະ ປະທານກອງປະຊຸມອາຊຽນຂະແໜງການທະນາຄານ ປີ 2016.

## III. <u>ວຽກງານວິຊາສະເພາະ</u>

### 1. <u>ສະພາບເສດຖະກິດເງິນຕາສາກົນ</u>

ສະພາບເສດຖະກິດ ສ. ອາເມລິກາ ແລະ ເສດຖະກິດຂອງເອີຣົບ ເລີ່ມມີສັນຍານຂະຫຍາຍຕົວຄ່ອຍໆດີຂຶ້ນ ເຫັນໄດ້ຈາກ GDP ໃນໄຕມາດ II ຂອງປີ 2015 ຂະຫຍາຍຕົວເພີ່ມຂຶ້ນ ຢູ່ໃນລະດັບ 3,9% ແລະ 0,4% ຕາມລຳດັບ ເມື່ອທຽບໃສ່ໄຕມາດດຽວກັນຂອງປີຜ່ານມາ. ໃນຂະນະທີ່ ເສດຖະກິດຂອງຍີ່ປຸ່ນ ຂະຫຍາຍຕົວຊ້າລົງ ຢູ່ໃນລະດັບ 0,3% ໃນໄຕມາດ II ຂອງປີ 2015 ຫຼຸດລົງຈາກ 1,1% ໃນໄຕມາດ I ຂອງປີ 2015 ແລະ ບາງປະເທດໃນກຸ່ມ BRICS ຄື: ປະເທດລັດເຊຍ, ບຣາຊິວ ແລະ ອາຟະລິກາໃຕ້ ເຫັນວ່າເສດຖະກິດຂະຫຍາຍຕົວຕ່ຳກວ່າໄຕມາດ II ຂອງປີ 2014 ຄື: -2,8%, -1,9% ແລະ -1,3% ຕາມລຳດັບ. ສຳລັບກຸ່ມປະເທດອາຊຽນ ໃນໄຕມາດ II ຂອງປີ 2015 ຜ່ານມາ ເສດຖະກິດຂອງປະເທດມາເລເຊຍ ແລະ ອິນໂດເນເຊຍ ຂະຫຍາຍຕົວຊ້າລົງ ມາຢູ່ໃນລະດັບ 1,1% ແລະ 3,78% ຕາມລຳດັບ ເມື່ອທຽບໃສ່ໄຕມາດດຽວກັນຂອງປີ 2014 ຍ້ອນການສົ່ງອອກ ແລະ ການຊົມໃຊ້ພາຍໃນຫຼຸດລົງ ແລະ ໃນຊ່ວງກາງເດືອນ 8/2015 ຫຼາຍປະເທດໄດ້ປັບຄ່າເງິນລົງໂດຍທຽບໃສ່ເງິນໂດລາສະຫະລັດ ເປັນຕົ້ນແມ່ນປະເທດ ອິນໂດເນເຊຍ, ມາເລເຊຍ, ໄທ, ຫວຽດນາມ ແລະ ຟີລິບປິນ ເນື່ອງຈາກການປັບຄ່າເງິນຢວນ ຂອງ ສປ. ຈີນ ໃຫ້ອ່ອນຄ່າລົງ ແລະ ຍັງເປັນມາດຕະການຮອງຮັບການປັບຂຶ້ນອັດຕາດອກເບ້ຍຂອງທະນາຄານກາງສະຫະລັດ (FED) ໃນທ້າຍປີນີ້;

ສະພາບອັດຕາແລກປ່ຽນສາກົນ ເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,06% ເມື່ອທຽບໃສ່ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີ ຍ້ອນຕົວເລກເສດຖະກິດຂອງ ສ. ອາເມລິກາ ອອກມາບໍ່ດີ ເປັນຕົ້ນຕົວເລກການສັ່ງຊື້ສິນຄ້າລົງທຶນ ຫຼຸດລົງ 2% ໃນເດືອນ 8/2015 ຈາກເພີ່ມຂຶ້ນ 1,9% ໃນເດືອນຜ່ານມາ. ສ່ວນເງິນບາດ, ເງິນຣູເປຍ ແລະ ເງິນໂດລາສິງກະໂປ ອ່ອນຄ່າລົງເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກດຸນການຄ້າຂອງປະເທດດັ່ງກ່າວຫຼຸດລົງ ເປັນຕົ້ນແມ່ນ ໄທ ເກີນດຸນການຄ້າຫຼຸດລົງເປັນ 721 ລ້ານໂດລາສະຫະລັດ ໃນເດືອນ 8/2015 ຈາກ 770,45 ລ້ານໂດລາສະຫະລັດ ໃນເດືອນ 7/2015;

ລາຄານ້ຳມັນໃນຕະຫຼາດໂລກ ເພີ່ມຂຶ້ນ 6,85% ມາເປັນ 46,82 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນເພີ່ມຂຶ້ນ ເຫັນໄດ້ຈາກສຳນັກງານພະລັງງານສາກົນ (IEA) ຄາດຄະເນຄວາມຕ້ອງການນ້ຳມັນໃນຕະຫຼາດໂລກ ເພີ່ມຂຶ້ນຈາກທີ່ຄາດຄະເນຄັ້ງຜ່ານມາ 0,17 ລ້ານບາເຣວ/ວັນ ມາເປັນ 95,20 ລ້ານບາເຣວ/ວັນ ບວກກັບການອ່ອນຄ່າຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ. ສ່ວນລາຄາຄຳໃນຕະຫຼາດສາກົນ ເພີ່ມຂຶ້ນ 0,23% ເປັນ 1.131,76 ໂດລາສະຫະລັດ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ບວກກັບການອ່ອນຄ່າຂອງເງິນໂດລາສະຫະລັດ ໃນຕະຫຼາດສາກົນ.

## 2. <u>ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ</u>

ທະນາຄານແຫ່ງ ສປປ ລາວ ໄດ້ສືບຕໍ່ປະຕິບັດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກດ້ານເງິນຕາ ໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມປະລິມານເງິນ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ເໝາະສົມ ລາຍລະອຽດດັ່ງລຸ່ມນີ້:

- ອັດຕາເງິນເຟີ້ປະຈຳເດືອນ 10/2015 (ຕົວເລກຄາດຄະເນ) ຢູ່ໃນລະດັບ 1,26% ເພີ່ມຂຶ້ນ 0,03% ຈາກ 1,23% ໃນເດືອນ 09/2015;
- ຖານເງິນຕາປະຈຳເດືອນ 10/2015 ຫຼຸດລົງ 636,88 ຕື້ກີບ ຫຼື 2,01% ທຽບໃສ່ເດືອນ 9/2015 ສາເຫດຍ້ອນທະນາຄານທຸລະກິດຖອນເງິນຝາກເປັນເງິນສົດອອກນຳໃຊ້ 77,29 ລ້ານໂດລາສະຫະລັດ ແລະ ລັດຖະບານໂອນເງິນຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ໃຫ້ຕ່າງປະເທດ 42,65 ລ້ານໂດລາສະຫະລັດ. ເຖິງວ່າທະນາຄານແຫ່ງ ສປປ ລາວ ປ່ອຍສິນເຊື່ອໃຫ້ໂຄງການບຸລິມະສິດຂອງລັດຖະບານ 20 ລ້ານໂດລາສະຫະລັດ, ທະນາຄານທຸລະກິດຮັບເງິນໂອນຈາກຕ່າງປະເທດ ສຸດທິ 7,26 ລ້ານໂດລາສະຫະລັດ ແລະ ທະນາຄານແຫ່ງ ສປປ ລາວ ປ່ອຍສິນເຊື່ອໃຫ້ທະນາຄານທຸລະກິດ 51 ຕື້ກີບ. ຊຶ່ງເຮັດໃຫ້ປະລິມານເງິນ $M_2$ ເພີ່ມຂຶ້ນ 2.175,29 ຕື້ກີບ ຫຼື 3,72% ເມື່ອທຽບໃສ່ເດືອນ 9/2015;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 10/2015 ເຫັນວ່າເງິນກີບແຂງຄ່າ 0,04% ທຽບໃສ່ເງິນໂດລາສະຫະລັດ ແລະ ແຂງຄ່າ 1,78% ທຽບໃສ່ເງິນບາດ. ສ່ວນຕ່າງລະຫວ່າງອັດຕາ ທທກ ກັບອັດຕາຕະຫຼາດຫຍັບອອກຈາກກັນສຳລັບກີບທຽບໂດລາ ຄື: ຈາກ 0,94% ມາເປັນ 1,26% ແຕ່ຫຍັບເຂົ້າຫາກັນສຳລັບກີບທຽບບາດ ຈາກ 0,59% ມາເປັນ 0,57%. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າ 1,28% ທຽບກັບເງິນໂດລາ ແຕ່ແຂງຄ່າ 8,68% ທຽບກັບເງິນບາດ;